# ກອງທຶນຫຼຸດຜ່ອນຄວາມທຸກຍາກ
# (ປະກາດຮັບສະໝັກພະນັກງານ)

**ປະເທດ:** ສ ປ ປ ລາວ

**ໂຄງການ:** ກອງທຶນຫລຸດຜ່ອນຄວາມທຸກຍາກ

**ທຶນຊ່ວຍເຫລືອລ້າເລກທີ.:** JSDF TF 097786

**ເລກທີໂຄງການ.:** P 123891

**ວັນທີເປີດຮັບສະໝັກ:** 16 ສິງຫາ 2012. **ວັນທີປິດຮັບສະໝັກ:** 30 ສິງຫາ 2012

ກອງທຶນຫລຸດຜ່ອນຄວາມທຸກຍາກ ເປັນໂຄງການໜຶ່ງທີ່ຂຶ້ນກັບລັດຖະບານ ກໍ່ຄືຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ, ຫ້ອງວ່າການລັດຖະບານ ໄດ້ຮັບທຶນຊ່ວຍເຫລືອຈາກທະນາຄານໂລກ, ອົງການຮ່ວມມືດ້ານການພັດທະນາປະເທດສະວິດເຊີແລນ, ອົງການອົດສ໌ຕາລີ ແລະ ກອງທຶນພັດທະນາສັງຄົມຂອງຍີ່ປຸ່ນ ເພື່ອຊ່ວຍເຫລືອປະຊາຊົນຜູ້ທຸກຍາກ ໂດຍການສະໜອງພື້ນຖານໂຄງລ່າງຂະໜາດນ້ອຍ, ສ້າງຄວາມເຂັ້ມແຂງ ແລະ ສ້າງກິດຈະກຳປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ ຢູ່ຂັ້ນບ້ານ ແລະ ກຸ່ມບ້ານ. ປະຈຸບັນ ທລຍ ໄດ້ຮັບການສືບຕໍ່ໂຄງການໄລຍະທີສອງ (2011- 2016) ຊຶ່ງໃນນີ້ ຈະມີການປະຕິບັດກິດຈະກຳໃໝ່ພາຍໃຕ້ໂຄງການທີ່ມີຊື່ວ່າ “ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ” ສະນັ້ນ, ຈຶ່ງມີຄວາມຕ້ອງການນັກ ສຶກສາຈົບໃໝ່ ທີ່ມີຄວາມຮູ້, ຄວາມສາມາດ ແລະ ມີເປົ້າໝາຍໃນການເຮັດວຽກຊ່ວຍເຫລືອຜູ້ທຸກຍາກ ເພື່ອເປັນຜູ້ປະສານງານ ປະຈຳຢູ່ຂັ້ນກຸ່ມບ້ານ ຂອງແຕ່ລະແຂວງ/ເມືອງ ດັ່ງນີ້:

**<u>ນັກສຶກສາຈົບໃໝ່ ຫລື ອາສາສະໝັກ ເພື່ອເປັນຜູ້ປະສານງານໂຄງການປັບປຸງຊີວິດການເປັນຢູ່ ແລະ ໂພສະນາການຂັ້ນບ້ານ</u>:**

**ຈຳນວນທັງໝົດ 10 ຕຳແໜ່ງ, ໃນນັ້ນ 4 ຕຳແໜ່ງ ປະຈຳຢູ່ 2 ກຸ່ມບ້ານ ຂອງເມືອງເຊໂປນ (ແຂວງສະຫວັນນະເຂດ) ແລະ 6 ຕຳແໜ່ງ ປະຈຳຢູ່ 3 ກຸ່ມບ້ານ ຂອງເມືອງວຽງທອງ (ແຂວງຫົວພັນ)**

## <u>ຈຸດປະສົງຫລັກຂອງຕຳແໜ່ງ:</u>

ໂຄງການ ປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ (LONG) ມີຄວາມຕ້ອງການ ອາສາສະໝັກ ທີ່ຈົບການສຶກສາໃໝ່ ເພື່ອບັນຈຸເຂົ້າເປັນພະນັກງານ ຫລັກແຫຼ່ງຂອງຊຸມຊົນ ຊຶ່ງເອີ້ນວ່າ ***ຜູ້ປະສານງານ ວຽກງານປັບປຸງຊີວິດການເປັນຢູ່ ຂັ້ນບ້ານ ( VLC) ແລະ ຜູ້ປະສານງານວຽກງານໂພສະນາການຂັ້ນບ້ານ(VNC) ຂອງໂຄງການ*** *LONG. ໂຄງການດັ່ງກ່າວແມ່ນຈະກວມເອົາ 10-15 ກຸ່ມບ້ານ* (ປະມານ 4 ບ້ານຕໍ່ປະສານງານ ບ້ານໜຶ່ງທ່ານ) **ເພື່ອໃຫ້ການສະໜັບສະໜູນ ໃນການຈັດຕັ້ງປະຕິບັດກິດຈະກຳໂຄງການ LONG. ຜູ້ປະສານງານ ວຽກງານປັບປຸງຊີວິດການເປັນຢູ່ ແລະ ຜູ້ປະສານງານວຽກງານໂພສະນາການຂັ້ນບ້ານ ຈະໄດ້ປະຈຳການຢູ່ຫ້ອງການກຸ່ມບ້ານ. ຊຶ່ງຄວາມຄາດຫັວງ ແມ່ນມີໜ້າທີ່ ເຮັດວຽກໃຫ້ຄຳແນະນຳ ຢ່າງໃກ້ສິດ ຮ່ວມກັບ ກຸ່ມຊ່ວຍເຫຼືອຊຶ່ງກັນ ແລະ ກັນຂອງຊາວບ້ານໃນການຂັບເຄື່ອນສັງຄົມ, ການກຳນົດບູລິມະສິດ, ການສ້າງຕັ້ງກຸ່ມຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແລະ ສ້າງຄວາມເຂັ້ມ**

**ແຂງ ໃນການຈັດຕັ້ງປະຕິບັດ ການນຳໃຊ້ທຶນຂອງກຸ່ມຊ່ວຍເຫຼືອຊຶ່ງກັນ ແລະ ກັນ. ຜູ້ປະສານງານ ວຽກງານປັບປຸງຊີວິດ ການເປັນຢູ່ ແລະ ຜູ້ປະສານງານວຽກງານໂພສະນາການຂັ້ນບ້ານ ຈະໄດ້ລາຍງານໃຫ້ ຜູ້ປະສານງານໂຄງການ LONG ເມືອງ ຫລືຜູ້ທີ່ໄດ້ຮັບການແຕ່ງຕັ້ງ**

## <u>ໜ້າທີ່ຮັບຜິດຊອບສະເພາະ</u>

- ແກ້ໄຂບັນຫາຄວາມຕ້ອງການຂອງຊຸມຊົນ
- ອຳນວຍຄວາມສະດວກ ໃນການພັດທະນາ ໂດຍອີງໃສ່ວິໄສທັດ(ທິດທາງ) ເພື່ອພັດທະນາບ້ານ ເພື່ອປັບປຸງຊີວິດການເປັນຢູ່ ແລະ ໂພສະນາການ
- ອຳນວຍຄວາມສະດວກ ການຈັດກອງປະຊຸມ ແລະ ການຝຶກອົບຮົມຂັ້ນບ້ານ
- ລະດົມຊຸມຊົນ ເພື່ອໃຫ້ມີການປ່ຽນແປງການພັດທະນາຂອງເຂົາເຈົ້າ
- ສ້າງຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບກຸ່ມຊ່ວຍເຫຼືອຊຶ່ງກັນ ແລະ ກັນ
- ລາຍງານ ການຈັດຕັ້ງປະຕິບັດກິດຈະກຳຢູ່ຂັ້ນບ້ານເປັນປົກກະຕິ

## <u>*ຄຸນວຸດທິຂອງຜູ້ສະໝັກ :*</u>

- ຈົບການສຶກສາຂະແໜງກະສິກຳ ຫຼື ພັດທະນາຊົນນະບົດ(ສຳລັບຜູ້ປະສານງານ ດ້ານການປັບປຸງຊີວິດການເປັນຢູ່) ແລະ ຈົບຂະແໜງການແພດ ຫຼື ການຮັກສາສຸຂະພາບຂັ້ນຕົ້ນ (ສຳລັບຜູ້ປະສານງານ ດ້ານໂພສະນາການ) ຫຼື ຈົບຂະແໜງວິທະຍາສາດສັງຄົມ, ເສດຖະ ກິດຊົນນະບົດ, ການສຶກສາ ດ້ານການພັດນາ ແລະ ຂະແໜງການ ກ່ຽວຂ້ອງອື່ນໆ
- ສາມາດເຮັດວຽກຮ່ວມກັບຊຸມຊົນໃນເຂດຊົນນະບົດ
- ສາມາດເດີນທາງ ແລະ ຢູ່ກັບປະຊາຊົນຜູ້ທຸກຍາກ ໃນເຂດຊົນນະບົດຫ່າງໄກສອກ ຫລີກ
- ອາຍຸລະຫວ່າງ 20 - 35 ປີ ແລະ ມີສຸຂະພາບແຂງແຮງ
- ມີຄວາມພອ້ມ ທີ່ຈະເຮັດວຽກຢ່າງນ້ອຍ 2 ປີ ຕໍ່ເນື່ອງກັນ ດ້ວຍຄວາມສະມັກໃຈ(ຊຶ່ງຈະເລີ້ມແຕ່ ກາງເດືອນທັນວາ 2011 ເປັນຕົ້ນໄປ)
- ມີໃບຂັບຂີ່ລົດຈັກ.
- ຜູ້ສະໝັກທ່ານໃດສາມາດເວົ້າ ພາສາທ້ອງຖິ່ນໄດ້ ໜຶ່ງໃນພາສາຕໍ່ໄປນີ້ ເຊັ່ນ ( ກື່ມມຸ, ລາເມດ, ມົ້ງ, ຢ້າວ, ຕຣີ ແລະ ມາກອງ, ກາຕາງ, ປາກົກ, ກາຕູ, ກາລຸງ, ຍ່ອຍ)ຈະໄດ້ຮັບການພິຈາລະ ນາເປັນພິເສດ.
  ຖ້າເປັນຜູ້ຍິງ ແລະ ເຄີຍເຮັດວຽກກ່ຽວກັບການພັດທະນາຊົນນະບົດມາກ່ອນຈະໄດ້ຮັບການພິຈາລະນາເປັນກໍລະນີພິເສດ.

<u>ໝາຍເຫດ:</u> 1). **ຜູ້ສະໝັກທີ່ເປັນຄົນທ້ອງຖິ່ນເປົ້າໝາຍຈະໄດ້ຮັບການພິຈາລະນາເປັນພິເສດ.**

2). **ຜູ້ທີ່ໄດ້ຮັບຄັດເລືອກ ຈະໄດ້ຮັບເງິນເດືອນ ແລະ ນະໂຍບາຍ ຕາມລະບຽບຂອງໂຄງການ.**

ສໍາລັບທ່ານທີ່ສົນໃຈຈະສະໝັກ ສາມາດຍື່ນເອກະສານສະໝັກງານ ໄປຍັງທີ່ຢູ່ທີ່ທ່ານສະດວກທີ່ສຸດ ດັ່ງນີ້:

- ຫ້ອງການ ທລຍ ສູນກາງ ຊຶ່ງຕັ້ງຢູ່ຫ້ອງວ່າການລັດຖະບານ, ນະຄອນຫລວງວຽງຈັນ (ຕິດຕໍ່ ທ່ານ ນ. ເຂັມພອນ ມະນີເພັດ, ໂທລະສັບ: 021 261 479-80, ຕໍ່ 114 ແຟັກ: 021 261 481), email: khemphone@prflaos.org
- ຫ້ອງການ ທລຍ ແຂວງສະຫວັນນະເຂດ (ຕິດຕໍ່ ທ່ານ ນາງ ມະໄລຈັນ ກຸນລະບຸດ, ໂທລະສັບ/ແຟັກ: 041 252578).
- ຫ້ອງການ ທລຍ ແຂວງຫົວພັນ ຊຶ່ງຕັ້ງຢູ່ກັບຫ້ອງການກໍ່ສ້າງຮາກຖານ ແລະ ພັດທະນາຊົນນະບົດຮອບດ້ານແຂວງຫົວພັນ (ຕິດຕໍ່ ທ່ານ ນ. ພາທອງ ແພງສົມພັນ, ໂທລະສັບ/ແຟັກ: 064 313 000).

<u>**ເອກະສານຍື່ນສະໝັກປະກອບມີ:**</u>

1. ໃບຄໍາຮ້ອງສະໝັກງານ ຂຽນດ້ວຍຕົນເອງ (ລະບຸຕໍາແໜ່ງ ແລະ ບ່ອນປະຈໍາການ),
2. ຊີວະປະຫວັດທີ່ປະກອບມີຂໍ້ມູນຄົບຖ້ວນ (ອາດຈະໃຊ້ແບບຟອມທົ່ວໄປ ຫລື ຂຽນດ້ວຍຕົນເອງ) ເປັນພາສາລາວ ຫລື ພາສາອັງກິດ.
3. ເອກະສານຢັ້ງຢືນຕ່າງໆ: ໃບປະກາດຈົບການສຶກສາຕ່າງໆ, ໃບຄະແນນຈົບການສຶກສາ (ຖ້າມີ), ໃບຜ່ານງານ, ສໍາເນົາບັດປະຈໍາຕົວ ຫລື ປື້ມສໍາມະໂນຄົວ, ພ້ອມດ້ວຍ ຮູບຖ່າຍຂະໜາດ 3x4 (1ໃບ).

**ວັນທີສຸດທ້າຍຂອງການເປີດຮັບສະໝັກ: 30 ສິງຫາ 2012**

ກະລຸນາຮັບຊາບວ່າ ກອງທຶນຈະທໍາການຕິດຕໍ່ຫາຜູ້ທີ່ເໝາະສົມ ແລະຖືກຕ້ອງຕາມເງື່ອນໄຂທີ່ຄົບຖ້ວນເທົ່ານັ້ນ ເພື່ອດໍາເນີນຂະບວນການປະເມີນ. (ເອກະສານສະໝັກທຸກຢ່າງຈະບໍ່ອະນຸຍາດໃຫ້ຖອນຄືນ).

**(ຂໍຂອບໃຈທຸກທ່ານ ທີ່ໃຫ້ຄວາມສົນໃຈຮ່ວມວຽກກັບກອງທຶນຫລຸດຜ່ອນຄວາມທຸກຍາກ)**